ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1549 /ທຄຕລ...2025...
ນະຄອນຫຼວງວຽງຈັນ, ວັນທີ:...23 MAY 2025...

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ ອຸປະກອນປ້ອງກັນຄວາມປອດໄພ Firewall.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ຊາບວ່າ ທຄຕລ ມີຄວາມຕ້ອງການ ອຸປະກອນປ້ອງກັນຄວາມປອດໄພ Firewall ຈຳນວນ 01 ຊຸດ ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

**1.** ອຸປະກອນ Firewall ຈຳນວນ 1 ຊຸດ ຫຼື 02 ໜ່ວຍ **(HA)** ສຳລັບລາຍລະອຽດຄວາມຕ້ອງການມີດັ່ງລຸ່ມນີ້

| ລ/ດ | ລາຍລະອຽດຄວາມຕ້ອງການ | | ໝາຍເຫດ |
|---|---|---|---|
| **I.** | **Hardware** | **Requirement** | |
| 1. | Form Factor | Rack Mount, 1 RU | |
| 2. | Power supply | 2 | Redundant |
| 3. | System Disk Storage | >= 480 GB SSD | |
| 4. | Airflow | Side and Front to Black | |
| **II.** | **Interface** | **Requirement** | |
| 1. | Interface GE RJ45 or Support 1Gbps SFP Copper Modules | >=16 Port | ຖ້າລຸ້ນທີ່ຊັບພອດ Support 1Gbps SFP Copper Modules ແມ່ນ Include ມາພ້ອມກັບອຸປະກອນ 16 ອັນ |
| 2. | Interface 10 GB SFP+ | >=2Port | Included |
| 3. | HA Port | >=2 Port | |
| 4. | Rj45 Console Port | 1 | |
| 5. | USB Port | >=1 | |
| **III.** | **System Performance and Capacity** | **Requirement** | |
| 1. | IPS Throughput | >=13 GB | |
| 2. | NGFW Throughput | >=11 GB | |
| 3. | Threat Protection Throughput | >=10 GB | |
| 4. | IPv4 Firewall Throughput (1518 / 512 / 64 byte, UDP) | >= 85 / 85 / 50 Gbps | |
| 5. | IPv6 Firewall Throughput (1518 / 512 / 64 byte, UDP) | >= 85 / 85 / 50 Gbps | |
| 6. | Firewall Throughput (Packet per Second) | >=100 Mbps | |
| 7. | Concurrent Sessions (TCP) | >= 8 million | |
| 8. | New Sessions/Second (TCP) | >= 500 000 | |
| 9. | IPsec VPN Throughput | >=50 GB | |

| | | | |
|---|---|---|---|
| 10. | SSL-VPN Throughput | >=4 Gbps | |
| 11. | SSL Inspection Throughput (IPS, avg. HTTPS) | >=8 Gbps | |
| 12. | SSL Inspection Concurrent Session | >=800000 | |
| 13. | Support Virtual Firewall | >=10 | Included 10 Virtual Firewall |
| 14. | High Availability Configurations | Active-Active, Active-Passive, Active/Standby | |
| **IV.** | **Software** | **Requirement** | |
| 1. | Ant-Malware | Supported | Included |
| 2. | Advance Malware Detection | Supported | Included |
| 3. | IPS | Supported | Included |
| 4. | Application Control | Supported | Included |
| 5. | Web Filtering | Supported | Included |
| **V.** | MA & Subscription 24x7 Support | **3 Years** | Included |

- **ເງື່ອນໄຂຂອງບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ທີ່ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

  - **<u>ເອກະສານ ຊອງທີ 1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2022-2024.
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 30/05/2025 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: **procurement@bcel.com.la ແລະ inspect-it@bcel.com.la** ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.

  - **<u>ເອກະສານ ຊອງທີ 2:</u> (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການໃຫ້ລະອຽດ ແລະ ຕ້ອງລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 10/09/2025)** ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນພາຍໃນ 15 ວັນ.
3. **ໃນ ວັນອັງຄານ ຕອນເຊົ້າ ວັນທີ 10/06/2025 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມໃຫຍ່ດອກຄູນ ຊັ້ນ 5 ອາຄານ C.

- **<u>ໝາຍເຫດ:</u>**
  - ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**
  1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
  2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- **ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**
  - **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນ ລັດຖະການ, ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ໂອນຖ່າຍຂໍ້ມູນ, ຕິດຕັ້ງສຳເລັດຖືກຕ້ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
  - **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 12 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ນ. ສາຍສະໝອນ ຈັນທະຈັກ

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (Server ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | .... ປີ | (ໃຫ້ລະບຸ) | | | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: